ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 11 ຫາ 15 ທັນວາ 2023




ກະຊວງກະສິກຳ ແລະ ປ່າໄມ້ ຈັດງານສະເຫຼີມສະຫຼອງ ວັນດິນໂລກ ປະຈຳປີ 2023

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ກະຊວງກະສິກຳ ແລະ ປ່າໄມ້ຈັດງານສະເຫຼີມສະຫຼອງ ວັນດິນໂລກ (World Soil Day) ປະຈຳປີ 2023

ການສະເຫຼີມສະຫຼອງວັນດິນໂລກ ແມ່ນງານປະຈຳປີ ທີ່ທຸກປະເທດໃນໂລກ ຕ້ອງໄດ້ຈັດການສະເຫຼີມສະຫຼອງ ຕາມມະຕິຕົກລົງ ຂອງກອງປະຊຸມຂອງສະຫະປະຊາຊາດ ຄັ້ງທີ 68 ໃນ ເດືອນ ທັນວາ 2013 ທີ່ກຸງໂຣມ, ປະເທດອີຕາລີ ໂດຍຖືເອົາວັນທີ 5 ທັນວາ ຂອງທຸກໆ ປີ ເປັນວັນດິນໂລກ (World Soil Day). ວັນດິນໂລກ ແມ່ນເກີດຂຶ້ນເນື່ອງຈາກສະຫະພາບວິທະຍາສາດດ້ານດິນສາກົນ ເຫັນວ່າ ຊັບພະຍາກອນດິນ ສຳລັບການຜະລິດສະບຽງອາຫານ ນັບມື້ນັບເຊື່ອມໂຊມ ແລະ ຫຼຸດໜ້ອຍຖອຍລົງ ທັງປະລິມານ ແລະ ຄຸນນະພາບ, ການເຜີຍແຜ່ໃຫ້ຄວາມຮູ້ດ້ານດິນ ແລະ ການເພີ່ມຄວາມຮັບຮູ້ກ່ຽວກັບຄວາມສຳຄັນຂອງດິນ ຕໍ່ການດຳລົງຊີວິດຂອງມວນມະນຸດ ແມ່ນຍັງຕໍ່າຫຼາຍ ຈຶ່ງຈຳເປັນຕ້ອງໄດ້ສ້າງຕັ້ງວັນດິນໂລກຂຶ້ນ ເພື່ອເປັນເວທີ ເສີມສ້າງຄວາມຮັບຮູ້ດ້ານດິນ ໄດ້ຢ່າງເປັນຮູບປະທຳ ແລະຕໍ່ເນື່ອງ ພ້ອມກັນທົ່ວໂລກ.

ໃນວັນທີ 29 ພະຈິກ 2023 ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງໄດ້ຈັດງານສະເຫຼີມສະຫຼອງວັນດິນໂລກ ປະຈຳປີ 2023 ຂຶ້ນ ພາຍໃຕ້ຄຳຂວັນທີ່ວ່າ “ດິນ ແລະ ນ້ຳ ເປັນພື້ນຖານຂອງຊີວິດ ຫຼື Soil and Water: a Source of Life” ແນໃສ່ໃຫ້ທຸກຄົນເຫັນໄດ້ຄວາມສຳຄັນ ແລະ ຄວາມຈຳເປັນ ອັນຂາດກັນບໍ່ໄດ້ ຂອງສາຍພົວພັນລະຫວ່າງ ດິນ ແລະ ນ້ຳ ເພື່ອບັນລຸ ການຟື້ນຟູ ລະບົບອາຫານ ແລະ ການກະເສດ ແບບຍືນຍົງ, ທັງເປັນການສ້າງ ໂອກາດ ແລະ ເງື່ອນໄຂ ຊຸກຍູ້ໃຫ້ສັງຄົມທົ່ວໂລກ ມີສ່ວນຮ່ວມໃນການອະນຸລັກ ແລະ ປັບປຸງຄຸນນະພາບຂອງດິນ ແລະ ຮັກສາແຫຼ່ງນ້ຳ.

ເປັນກຽດເຂົ້າໃນການເປີດງານສະເຫຼີມສະຫຼອງຄັ້ງນີ້ ໂດຍ ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ທ່ານ ຈັນທະລາດ ປອງມາລາ ຜູ້ຕາງໜ້າອົງການອາຫານ ແລະ ການກະເສດ ປະຈຳ ສປປ ລາວ ໂດຍມີ ຫົວໜ້າກົມ, ຮອງຫົວໜ້າກົມ, ສະຖາບັນ, ສູນ, ອ້ອມຂ້າງກະຊວງ ກະສິກຳ ແລະ ປ່າໄມ້,



ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງ/ນະຄອນຫຼວງ, ຕາງໜ້າໂຄງການ, ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ.

ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ກ່າວວ່າການສະເຫຼີມສະຫຼອງ ວັນດິນໂລກປີນີ້ ແມ່ນເນັ້ນໃຫ້ເຫັນເຖິງ ຄວາມສຳຄັນຂອງດິນ ແລະ ນ້ຳ ຕໍ່ກັບສິ່ງທີ່ມີຊີວິດ ກໍຄືຄວາມສຳຄັນຕໍ່ການຜະລິດກະສິກຳ ແລະ ເພື່ອເຮັດໃຫ້ ການນຳທຸກຂັ້ນ, ນັກວິຊາການ, ນັກຄົ້ນຄ້ວາ, ນັກຮຽນຮູ້ປັນຍາຊົນ, ຊາວກະສິກອນ ແລະ ປະຊາຊົນ ເຂົ້າໃຈ ແລະ ເຫັນໄດ້ຄວາມສຳຄັນ ໃນການປະກອບສ່ວນ ຮ່ວມມືກັນ ປົກປັກຮັກສາ, ປັບປຸງບຳລຸງດິນ ໃຫ້ມີຄວາມອຸດົມສົມບູນ ສາມາດນຳໃຊ້ໄດ້ຢ່າງຍາວນານ ດ້ວຍການໄຖໜ້າດິນບໍ່ເລິກ, ການປູກພືດໝູນວຽນ, ການເພີ່ມອິນຊີວັດຖຸໃນດິນ, ການປູກພືດຄຸມດິນ, ການປັບປຸງຄຸນນະພາບຂອງດິນ, ປູກ ແລະ ປົກປັກຮັກສາປ່າໄມ້ ເພື່ອຫຼຸດຜ່ອນການເຊາະເຈື່ອນຂອງດິນ ແລະ ກັກເກັບນ້ຳ ຊຶ່ງວິທີການທີ່ກ່າວມານັ້ນ ມີສ່ວນຊ່ວຍໃນການປົກປັກຮັກສາດິນ ແລະ ນ້ຳ ຊ່ວຍຫຼຸດຜ່ອນ ຄວາມຮຸນແຮງ ຂອງການປ່ຽນແປງດິນຟ້າອາກາດ. ພ້ອມນັ້ນຮຽກຮ້ອງມາຍັງສັງຄົມ ໃຫ້ຖືເອົາວຽກງານການບຳລຸງຮັກສາດິນ-ຮັກສານ້ຳນັ້ນ ແມ່ນຄວາມຮັບຜິດຊອບຂອງພວກເຮົາທຸກຄົນ ກ່ອນທີ່ມັນຈະລ່າຊ້າເກີນໄປ ທັງນີ້ ກໍ່ເພື່ອຮັບປະກັນ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ຂອງມວນມະນຸດ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;